ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 09974 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 03 ກ.ລ 2023

# ແຈ້ງການ

**ເຖິງ:** - ຫົວໜ້າພະແນກການອ້ອມຂ້າງກົມພາສີ.

- ຫົວໜ້າພາສີປະຈຳແຂວງ, ພາສີປະຈຳນະຄອນຫລວງ ແລະ ຫົວໜ້າດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຄຸ້ມຄອງ, ກວດກາ ແລະ ການຈັດເກັບຄ່າທຳນຽມ, ຄ່າບໍລິການ ສຳລັບ **ທາງລາກບັນທຸກສິນຄ້າ** ຜ່ານເຂົ້າ-ອອກ ດ່ານຊາຍແດນ ຂອງ ສປປລາວ.

- ອີງຕາມ ລັດຖະບັນຍັດປະທານປະເທດ ສະບັບເລກທີ 002/ປປທ ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ;
- ອີງຕາມ ຄຳແນະນຳຂອງກະຊວງການເງິນ ສະບັບເລກທີ 6472/ກງ, ລົງວັນທີ 28 ທັນວາ 2021 ກ່ຽວກັບການຈັດຕັ້ງປະຕິບັດລັດຖະບັນຍັດປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ສຳລັບຂອງຂະແໜງພາສີ;
- ອີງຕາມ ຂໍ້ຕົກລົງ ລັດຖະມົນຕີກະຊວງການເງິນ ສະບັບເລກທີ 2059/ກງ, ລົງວັນທີ 29 ເມສາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມພາສີ.

ເພື່ອຮັບປະກັນໃນການຄຸ້ມຄອງພາຫະນະຂົນສົ່ງສິນຄ້າ (ທາງລາກ) ທີ່ໄດ້ມີທະບຽນຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບການກຳນົດ ໃນເວລາເຂົ້າ-ອອກຜ່ານດ່ານຊາຍແດນ ຂອງ ສປປລາວ ຕາມລະບຽບການກຳນົດ ແລະ ຮັບປະກັນໃນການຈັດຕັ້ງປະຕິບັດລັດຖະບັນຍັດປະທານປະເທດ ສະບັບເລກທີ 002/ປປທ ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ແລະ ນິຕິກຳກ່ຽວຂ້ອງ ໃຫ້ຖືກຕ້ອງ, ສອດຄ່ອງ, ຮັດກຸມ, ມີປະສິດທິພາບ, ຈັດເກັບລາຍຮັບເຂົ້າງົບປະມານທັນສະພາບການ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

## ກົມພາສີ ອອກແຈ້ງການ ດັ່ງນີ້:

1. ໃຫ້ເຈົ້າໜ້າທີ່ພາສີ ປະຈຳດ່ານຊາຍແດນ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ໃນການຄຸ້ມຄອງ, ກວດກາ ການເຂົ້າ-ອອກ ພາຫະນະຂົນສົ່ງສິນຄ້າ (ທາງລາກ) ຜ່ານດ່ານຊາຍແດນ ໃຫ້ສອດຄ່ອງກັບການອະນຸຍາດຂອງຂະແໜງການກ່ຽວຂ້ອງ, ພ້ອມທັງຈັດເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດປະທານປະເທດສະບັບເລກທີ 002/ປປທ ແລະ ຄຳແນະນຳຂອງກະຊວງການເງິນ ເລກທີ 6472/ກງ ແລະ ລະບຽບການທີ່ກົມພາສີກຳນົດອອກໃນຜ່ານມາ ໂດຍໃຫ້ອີງໃສ່ໜັງສືຂົນສົ່ງລະຫວ່າງປະເທດ ແລະ ຈຳນວນລໍ້ຂອງທາງລາກ ເພື່ອເປັນພື້ນຖານໃນການຈັດເກັບຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຖືກຕ້ອງ, ສອດຄ່ອງ ແລະ ຮັບປະກັນບໍ່ໃຫ້ລາຍຮັບຕົກເຮ່ຍ, ເສຍຫາຍ;

2. ໃຫ້ດຳເນີນການຄຸ້ມຄອງ ຕິດຕາມພາຫານະຂົນສົ່ງສິນຄ້າ (ທາງລາກ) ດ້ວຍລະບົບອີໂທນິກ ບໍ53 ເພື່ອຮັບປະກັນ ໃນການຕິດຕາມການຂ້າອອກປະເທດຢ່າງຮັດກຸມ, ພ້ອມທັງຈັດເກັບຄ່າບໍລິການ ຕາມທີ່ໄດ້ກຳນົດໃນລະບຽບການ ຢ່າງເຂັ້ມງວດ;
3. ມອບໃຫ້ພະແນກຄຸ້ມຄອງລະບົບຂໍ້ມູນຂ່າວສານ ແລະ ແຜນການ ກົມພາສີ ສົມທົບກັບ ທະນາຄານ ທີ່ມີລະບົບ ການຊຳລະເງິນ ຢູ່ບັນດາດ່ານຊາຍແດນ ໃນຂອບເຂດທົ່ວປະເທດ ເພື່ອດຳເນີນການ ຕາມຂັ້ນຕອນຊຳລະ ແລະ ການມອບເງິນ ຕາມລະບຽບການກຳນົດ, ສຳລັບດ່ານທີ່ຍັງບໍ່ທັນໄດ້ຕິດຕັ້ງລະບົບ ແມ່ນໃຫ້ເຈົ້າໜ້າທີ່ພາສີປະຈຳ ດ່ານຈັດເກັບ ແລະ ດຳເນີນຂັ້ນຕອນການສັ່ງມອບ, ລະບົບບັນຊີ ຕາມລະບຽບການກຳນົດ ຢ່າງຮັດກຸມ;
4. ມອບໃຫ້ຫົວໜ້າພະແນກອ້ອມຂ້າງກົມພາສີ, ຫົວໜ້າພາສີປະຈຳແຂວງ ແລະ ພາສີປະຈຳນະຄອນຫລວງ ເອົາໃຈໃສ່ ໃນການຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດຂອງເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ໃນຂອບເຂດທົ່ວ ປະເທດ ໃຫ້ມີປະສິດທິຜົນ ແລະ ຢ່າງເຂັ້ມງວດ;
5. ມອບໃຫ້ຫົວໜ້າໜ້າດ່ານພາສີຊາຍແດນ ອອກຂໍ້ຕົກແຕ່ງຕັ້ງ ມອບຄວາມຮັບຜິດຊອບໃຫ້ເຈົ້າໜ້າທີ່ພາສີ ໃນການ ຕິດຕາມ, ກວດກາ, ຄຸ້ມຄອງ ພາຫານະຂົນສົ່ງສິນຄ້າ (ທາງລາກ) ເຂົ້າ-ອອກ ດ່ານຊາຍແດນໃຫ້ມີຄວາມຖືກຕ້ອງ, ຮັດກຸມ ແລະ ຊັດເຈນ ຕາມປະເພດຂອງລໍ້ພາຫານະ ທີ່ໄດ້ບຽບການໄດ້ກຳນົດ;
6. ແຈ້ງການສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ວັນທີ 16 ຕຸລາ 2023 ເປັນຕົ້ນໄປ, ທຸກເອກະສານ ແລະ ເນື້ອໃນ ທີ່ບໍ່ ໄດ້ກຳນົດໃນແຈ້ງການສະບັບນີ້ ແມ່ນໃຫ້ປະຕິບັດຕາມລະບຽບການ ທີ່ກະຊວງການເງິນ ແລະ ກົມພາສີ ໄດ້ກຳນົດ ແມ່ນໃຫ້ສືບຕໍ່ປະຕິບັດ ແລະ ໄດ້ນຳໃຊ້ ຄືໃນໄລຍະຜ່ານມາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມ**

ພູເຂົາຄຳ ວັນນະວົງໄຊ

| | ປະເພດ | ຄ່າທຳນຽມ | ຄ່າສະຕິດເກີ ບ53 | |
|---|---|---|---|---|
|  | ຫົວລາກ | 180.000 ກີບ | 28,300 | |
|   | ລົດບັນທຸກ 10 - 12 ລໍ້ | 120.000 ກີບ | 28,300 | |
|  | ລົດບັນທຸກ 6 | 100.000 ກີບ | 28,300 | |
|   | ລົດບັນທຸກ 4 | 50.000 ກີບ | 28,300 | |
|   | ຫາງລາກ 10 – 12 ລໍ້ | 120.000 ກີບ | 28,300 | |
|  | ຫາງລາກເກີນ12 ລໍ້ | 180.000 ກີບ | 28,300 | |

## ກໍລະນີ ລົດລາກມີຫາງລາກ ມາພ້ອມກັບຕູ້ຄອນເທນເນີ 40 ຟຸດ

## ອອກສະຕິກເກີ ບ53  3 ໃບ



ສະຕິກເກີ ບ53 + ຄ່າທຳນຽມ
ລົດລາກ
28.300  + 180.000 ກີບ
ລວມ 208.300 ກີບ

ສະຕິກເກີ ບ53 + ຄ່າທຳນຽມ
ຕູ້ບັນຈຸສິນຄ້າ 40 ຟຸດ
28.300  + 30.000 ກີບ
ລວມ 58.300 ກີບ

ສະຕິກເກີ ບ53 + ຄ່າທຳນຽມ
ຫາງລາກ 10 – 12 ລໍ້
28.300  + 120.000 ກີບ
ລວມ 148.300 ກີບ

ຖ້າເຂົ້າໃນເມືອງຕ້ອງເສຍຄ່າທຳນຽມເພີ່ມ

ຫົວລາກ 150.000 ກີບ

ຫາງລາກ 150.000 ກີບ

ກໍລະນີຮອດແຕ່ສາງຢູ່ກັບດານ ບໍ່ໄດ້ເສຍຄ່າທຳນຽມເຂົ້າເມືອງ

**ກໍລະນີ ລົດລາກມີຫາງລາກ ມາພ້ອມກັບຕູ້ຄອນເທນເນີ 20 ຟຸດ 2 ຕູ້**

**ອອກສະຕິກເກີ ບ53  4 ໃບ**

ສະຕິກເກີ ບ53 + ຄ່າທໍານຽມ
ລົດລາກ
28.300  + 180.000 ກີບ
ລວມ 208.300 ກີບ

ສະຕິກເກີ ບ53 + ຄ່າທໍານຽມ
ຕູ້ບັນຈຸສິນຄ້າ 20 ຟຸດ
28.300  + 15.000 ກີບ
ລວມ 43.300 ກີບ

ສະຕິກເກີ ບ53 + ຄ່າທໍານຽມ
ຕູ້ບັນຈຸສິນຄ້າ 20 ຟຸດ
28.300  + 15.000 ກີບ
ລວມ 43.300 ກີບ

ສະຕິກເກີ ບ53 + ຄ່າທໍານຽມ
ຫາງລາກ 10 – 12 ລໍ້
28.300  + 120.000 ກີບ
ລວມ 148.300 ກີບ



ຖ້າເຂົ້າໃນເມືອງຕ້ອງເສຍຄ່າທໍານຽມເພີ່ມ

ຫົວລາກ 150.000 ກີບ

ຫາງລາກ 150.000 ກີບ

ກໍລະນີຣອດແຕ່ສາງຢູ່ກັບດານ ບໍ່ໄດ້ເສຍຄ່າທໍານຽມເຂົ້າເມືອງ

# ກໍລະນີ ລົດບັນທຸກ 10 ລໍ້ ມີຫາງລາກ

# ອອກສະຕິກເກີ ບ53  2 ໃບ

ສະຕິກເກີ ບ53 + ຄ່າທຳນຽມ

ຫາງລາກ 10 – 12 ລໍ້

28.300  + 120.000 ກີບ

ລວມ 148.300 ກີບ

ສະຕິກເກີ ບ53 + ຄ່າທຳນຽມ

ຫາງລາກ 10 – 12 ລໍ້

28.300  + 120.000 ກີບ

ລວມ 148.300 ກີບ



ຖ້າເຂົ້າໃນເມືອງຕ້ອງເສຍຄ່າທຳນຽມເພີ່ມ

ຫົວລາກ 150.000 ກີບ

ຫາງລາກ 150.000 ກີບ

ກໍລະນີຮອດແຕ່ສາງຢູ່ກັບດານ ບໍ່ໄດ້ເສຍຄ່າທຳນຽມເຂົ້າເມືອງ

**ກໍລະນີ ລົດລາກ ມີຫາງລາກນ້ຳມັນ**

**ອອກສະຕິກເກີ ບ53  2 ໃບ**

ສະຕິກເກີ ບ53 + ຄ່າທຳນຽມ
ລົດລາກ
28.300  + 180.000 ກີບ
ລວມ 208.300 ກີບ

ສະຕິກເກີ ບ53 + ຄ່າທຳນຽມ
ຫາງລາກ 10 – 12 ລໍ້
28.300  + 120.000 ກີບ
ລວມ 148.300 ກີບ



ຖ້າເຂົ້າໃນເມືອງຕ້ອງເສຍຄ່າທຳນຽມເພີ່ມ

ຫົວລາກ 150.000 ກີບ

ຫາງລາກ 150.000 ກີບ

ກໍລະນີຮອດແຕ່ສາງຢູ່ກັບດານ ບໍ່ໄດ້ເສຍຄ່າທຳນຽມເຂົ້າເມືອງ